ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທະນາຄານແຫ່ງ ສປປລາວ (ທຫລ) ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍ ເອກະສານ



ໃນວັນທີ 26 ສິງຫາ 2021 ຜ່ານມາ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດເຜີຍແຜ່ກົດໝາຍວ່າດ້ວຍເອກະສານຂຶ້ນຢູ່ທີ່ສະໂມສອນສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ໄຊລືຊາ ຜຸຍຍະວົງ ຫົວໜ້າກົມນິຕິກຳ, ທຫລ ເຊິ່ງມີຜູ້ເຂົ້າຮ່ວມທີ່ມາຈາກ ບັນດາກົມພາຍໃນ ທຫລ, ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ.

ການຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍເອກະສານດັ່ງກ່າວນີ້ ກໍ່ເພື່ອແນໃສ່ບັນດາພະນັກງານທີ່ເຮັດວຽກເລຂານຸການຫ້ອງການ ເຂົ້າໃຈດ້ານຮູບແບບໃນການກະກຽມ, ການຮ່າງ ແລະ ເກັບມຽນເອກະສານ ໃຫ້ເປັນລະບົບຄົບຊຸດ ລວມທັງຮູບແບບການຮ່າງເອກະສານທີ່ຖືກຕ້ອງຕາມກົດໝາຍ ເພື່ອໃຫ້ມີລັກສະນະ ແລະ ຮູບແບບ ເປັນເອກະພາບກັນໃນທາງລັດຖະການ ເຊິ່ງຈະເຮັດໃຫ້ວິຊາການທີ່ຮັບຜິດຊອບໜ້າທີ່ດັ່ງກ່າວ ມີຄວາມເປັນວິຊາການຂຶ້ນຕື່ມ ໂດຍທ່ານ ປທ ສຸລິສຸກ ທໍ ວິທະຍາກອນຈາກກະຊວງພາຍໃນ ໄດ້ນຳສະເໜີບັນດາຂັ້ນຕອນ ແລະ ວິທີການໃນການຮ່າງເອກະສານ ລວມທັງການນຳໃຊ້ໂປແກຼມຈັດໜ້າເອກະສານຢ່າງຫຼາກຫຼາຍ ພ້ອມນັ້ນ, ຍັງໄດ້ນຳສະເໜີເນື້ອໃນຂອງກົດໝາຍວ່າດ້ວຍເອກະສານໃຫ້ແກ່ຜູ້ເຂົ້າຮ່ວມຢ່າງລະອຽດ.

ກົດໝາຍວ່າດ້ວຍເອກະສານ ປະກອບມີ 10 ພາກ ລວມມີ 100 ມາດຕາ ໂດຍມີຈຸດປະສົງ ເພື່ອຄຸ້ມຄອງການນຳໃຊ້ ແລະ ການຕິດຕາມກວດກາວຽກງານເອກະສານ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ເປັນລະບົບ, ມີປະສິດທິພາບ ແລະ ທັນສະໄໝ ແນໃສ່ປົກປັກຮັກສາ ແລະ ອະນຸລັກເອກະສານທີ່ມີຄຸນຄ່າທາງປະຫວັດສາດ, ວັດທະນະທຳ, ສັງຄົມ ເພື່ອປະກອບເປັນຂໍ້ມູນຂ່າວສານໃນການສຶກສາຄົ້ນຄ້ວາ ແລະ ເປັນຫຼັກຖານອ້າງອີງ.

ການຈັດຕັ້ງເຜີຍແຜ່ດັ່ງກ່າວ ແມ່ນໃຊ້ເວລາ 1 ວັນເຕັ້ມ ໃນນັ້ນ, ໄດ້ມີການເຜີຍແຜ່ກົດໝາຍ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງແຕ່ລະພາກສ່ວນ ຢ່າງກົງໄປກົງມາ.

# ພາບ-ຂ່າວ: ສົມອົກ ເຄນຄຳແພງ





*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດ ຄ່າເງິນລາວ*